NAFRI
National Agriculture and Forestry Research Institute

# ຜົນສະຫຼຸບຂອງການຄົ້ນຄວ້າ

ສະບັບທີ: 10/2012

# ການສະໜອງການບໍລິການສັດຕະວະແພດເຊີງພານິດ: ເປັນທາງອອກທີ່ດີ ແລະ ຍັງຍືນນຶ່ງ ສໍາລັບການສະໜອງບໍລິການສຸຂະພາບສັດ

*ການເຂົ້າເຖິງການບໍລິການທາງດ້ານສັດຕະວະແພດ ຂອງຊາວກະສິກອນຜູ້ລ້ຽງສັດລາຍຍ່ອຍ ໃນ ສປປ ລາວ, ແມ່ນມີຄວາມຈໍາກັດ. ຍ້ອນແນວນັ້ນ, ໂຄງການ SADU ຈຶ່ງໄດ້ພະຍາຍາມ ເພື່ອຈະແກ້ໄຂບັນຫາດັ່ງກ່າວ ໂດຍການນໍາສະເໜີແຜນງານ ການໃຫ້ບໍລິການທາງດ້ານສັດຕະວະແພດໃນເຊີງພານິດ. ນັບຕັ້ງແຕ່ ໄດ້ເອົາແຜນງານການບໍລິການທາງດ້ານສັດຕະວະແພດໄປທົດລອງນໍາສະເໜີ ຢູ່ ແຂວງຊຽງຂວາງ ໃນ ປີ 2006, ອັດຕາການຕາຍຂອງສັດລ້ຽງຫຼຸດລົງ, ຈໍານວນຝູງສັດເພີ້ມຂຶ້ນ ແລະ ຄອບຄົວຜູ້ລ້ຽງສັດມີລາຍຮັບເພີ້ມຂຶ້ນ ຊຶ່ງເຫັນໄດ້ ຢູ່ ເມືອງແປກ, ເມືອງຄູນ ແລະ ເມືອງໜອງແຮດ. ນອກຈາກນີ້, ແຜນງານການໃຫ້ບໍລິການສັດຕະວະແພດເຊີງການຄ້າ ຍັງເປັນຮູບແບບທີ່ມີຄວາມຍືນຍົງ ແລະ ບໍ່ຕ້ອງການການສະໜັບສະໜູນຈາກຂ້າງນອກຕື່ມອີກ.*

## ນະວັດຕະກໍາ, ວິທີການ 'ແບບການຄ້າ'

ຮັບຮູ້ວ່າ ການເຂົ້າເຖິງການບໍລິການດ້ານສັດຕະວະແພດ ແມ່ນມີຄວາມສໍາຄັນຕໍ່ການພັດທະນາຂະແໜງການການລ້ຽງສັດແບບເຊີງການຄ້າ, ຊຶ່ງໃນໄລຍະຜ່ານມາ ລັດຖະບານແຫ່ງ ສປປ ລາວ ແລະ ຜູ້ໃຫ້ທຶນຕ່າງໆ ໄດ້ລົງທຶນເຂົ້າໃນລະບົບ ຫຼື ໃຫ້ແກ່ພະນັກງານສັດຕະວະແພດ ຂັ້ນບ້ານ ດ້ວຍການບໍລິການແບບຖົ່ມຂຸມ (ບໍ່ເສຍຄ່າ) ຢ່າງມະຫາສານ ແລະ ສູງທີ່ສຸດ. ມີການລົງທຶນເຂົ້າໃນແຜນງານຊັກຢາວັກແຊງຢູ່ໃນບ້ານ, ມີທະນາຄານອອມຊັບ ແລະ ມີການຝຶກອົບຮົມ ເພື່ອການປ້ອງກັນສຸຂະພາບສັດ ແລະ ເຂົ້າໃນກິດຈະກໍາການຄຸ້ມຄອງບໍລິຫານ, ປະເດັນຕ່າງໆ ທາງດ້ານສຸຂະພາບສັດໃຫ້ໝົດໄປ.

ຈາກພື້ນຖານທີ່ກ່າວມາຂ້າງເທິງນັ້ນ, ໂຄງການ SADU ໄດ້ສະຫຼຸບໃຫ້ເຫັນວ່າ ວິທີການບໍລິການສຸຂະພາບສັດທີ່ໄດ້ເຮັດໄປນັ້ນ ຢູ່ໃນແຂວງຊຽງຂວາງ ແມ່ນເປັນກົນໄກທີ່ຖືກຕ້ອງ. ໃນປີ 2006, ໄດ້ຮ່ວມກັບພະແນກກະສິກໍາ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ພ້ອມກັນພັດທະນາກອບແນວຄວາມຄິດ ຂອງການສະໜອງບໍລິການສຸຂະພາບສັດລ້ຽງແບບເຊີງການຄ້າ ຢູ່ໃນບ່ອນທີ່ໄດ້ມີການຝຶກອົບຮົມໃຫ້ແກ່ຊາວກະສິກອນມາແລ້ວ, ດໍາເນີນການເໝືອນເປັນວິສະຫະກິດ ດ້ວຍການສະໜອງການບໍລິການດ້ານສຸຂະພາບສັດ ຊຶ່ງໃນນັ້ນແມ່ນລວມທັງການສັກຢາວັກແຊງ, ການຮັກສາ ແລະ ລະບຽບການຕ່າງໆ ປິ່ນອ້ອມຢູ່ໃນບັນດາບ້ານຕ່າງໆເຫຼົ່ານັ້ນ. ໂຄງການສະໜອງການບໍລິການສຸຂະພາບສັດ ແມ່ນໄດ້ເລີ້ມຕົ້ນດ້ວຍການທົດລອງເຮັດໂຄງການນໍາຮ່ອງກ່ອນ ໂດຍໂຄງການ SADU, ຊຶ່ງເຮັດຢູ່ 3 ກຸ່ມບ້ານ ຂອງເມືອງແປກ (2006) ແລະ ຫຼັງຈາກນັ້ນ ໄດ້ຂະຫຍາຍໄປສູ່ເມືອງຄູນ ແລະ ເມືອງໜອງແຮດ.

ຈຸດດີອັນນຶ່ງ ຂອງການເຮັດຮູບແບບດັ່ງກ່າວນີ້ ຄືຜູ້ສະໝັກຮັບການສະໜອງບໍລິການດ້ານສຸຂະພາບສັດ ຕ້ອງໄດ້ເສຍຄ່າ ຫຼື ຈ່າຍຄ່າທໍານຽມສໍາລັບການຝຶກອົບຮົມ, ນີ້ກໍ່ເພື່ອຮັບປະກັນວ່າ ການເຂົ້າຮ່ວມແມ່ນໃຫ້ໄດ້ສະເພາະແຕ່ບຸກຄົນທີ່ມີຄວາມສົນໃຈ ຊຶ່ງວິທີການນີ້ ມັນຈະດີກວ່າທີ່ຈະໃຫ້ແຕ່ທາງຄະນະບ້ານຄັດເລືອກເອົາບຸກຄົນເຂົ້າມາຝຶກ. ການຝຶກອົບຮົມ ແມ່ນປະກອບດ້ວຍ ການເຮັດວຽກໃນຫ້ອງຮຽນ, ການຝຶກຫັດຕົວຈິງໃນການສັກຢາວັກແຊງ, ການຕອນສັດ, ການເສວະນາ ແລະ ການຄຸ້ມຄອງບໍລິຫານທຸລະກິດ. ນັກສໍາມະນາກອນທັງໝົດ ຈະໄດ້ຮັບກ່ອງຢາຂັ້ນພື້ນຖານ ແລະ ເອກະສານຕ່າງໆ. ການຝຶກອົບຮົມ ແມ່ນຈະດໍາເນີນໃນໄລຍະກ່ອນລະດູຝົນເລີ້ມຕົ້ນ, ນີ້ກໍ່ເພື່ອ, ພາຍຫຼັງສິ້ນສຸດການຝຶກອົບຮົມ ພວກເຂົາເຈົ້າສາມາດສະໜອງການບໍລິການດ້ານສຸຂະພາບສັດໄດ້ເລີຍ.

## ຜົນກະທົບ

ຜົນກະທົບຂອງໂຄງການ ແມ່ນສາມາດເຫັນໄດ້ເລີຍວ່າ: ອັດຕາຂອງການສັກຢາວັກແຊງໃຫ້ແກ່ສັດລ້ຽງເພີ້ມຂຶ້ນ ຈາກ 20% ເຖິງ 80%. ໃນປີທໍາອິດ, ພາຍຫຼັງການຝຶກອົບຮົມ, ການສະໜອງບໍລິການດ້ານສຸຂະພາບສັດແບບເຊີງພານິດ ເຮັດໃຫ້ມີກໍາໄລເຖິງ 70% ຫຼາຍກວ່າ ລາຍຈ່າຍສໍາລັບການບໍລິການ ແລະ ການເຮັດວຽກໃນຫຼາຍກວ່າ 20 ບ້ານ.

ການສະໜອງບໍລິການສັດຕະວະແພດເຊີງພານິດ ແມ່ນການສະໜອງການບໍລິການປະເພດຕ່າງໆ ຊຶ່ງລວມມີ: ການຮັກສາປິ່ນປົວ, ການຂ້າແມ່ທ້ອງ, ການຕອນສັດ ແລະ ແຮງງານ, ຊຶ່ງກິດຈະກໍາທີ່ສໍາຄັນທັງໝົດເຫຼົ່ານັ້ນ ແມ່ນຊາວກະສິກອນຜູ້ລ້ຽງສັດລາຍຍ່ອຍ ບໍ່ມີຄວາມສາມາດທີ່ຈະເຮັດດ້ວຍຕົນເອງເລີຍ. ການບໍລິການທັງໝົດນັ້ນ ແມ່ນມີຄວາມຈໍາເປັນສໍາລັບຊາວກະສິກອນຜູ້ລ້ຽງສັດລາຍຍ່ອຍ ເພາະອີງຕາມການວິເຄາະຂອງໂຄງການ SADU ແລ້ວ ຜົນທີ່ມີສັດຕາຍ ເຖິງ 25% ແມ່ນມາຈາກພະຍາດທີ່ບໍ່ໜັກໜາຫຍັງ ເຊັ່ນ ສັດມີອາການອ່ອນເພັຍ.

ພະນັກງານວິຊາການຂັ້ນແຂວງ ໄດ້ນໍາໃຊ້ວິທີການການສະໜອງບໍລິການສັດຕະວະແພດເຊີງພານິດ ແລະ ໄດ້ເລີ້ມຕົ້ນຂະຫຍາຍຕົວຮູບແບບດັ່ງກ່າວ ຢູ່ ເມືອງຄໍາ ແລະ ເມືອງໂພນໄຊ, ຊຶ່ງເປັນການຢືນຢັນໃຫ້ເຫັນເຖິງຄວາມສໍາເລັດຂອງແຜນງານໃຫ້ຖືກຮັບຮູ້ ແລະ ໄດ້ຮັບບໍລິການຫຼາຍຂຶ້ນ.

## ປະສິດທິພາບ ແລະ ຄວາມຍືນຍົງ

ແຜນງານສະໜອງບໍລິການສັດຕະວະແພດເຊີງພານິດ ແມ່ນຂຶ້ນຢູ່ກັບຄວາມຄິດທີ່ຈະຂັບເຄື່ອນໃນບາງໂອກາດໃຫ້ເກີດຜົນກໍາໄລ, ເຮັດໃຫ້ການສະໜອງການບໍລິການມີປະສິດທິຜົນ ແລະ ເຊື່ອຖືຫຼາຍກວ່າການບໍລິການແບບບໍ່ເສັຍຄ່າ ທີ່ເຮັດໃນໄລຍະຜ່ານມາ. ມາເຖິງປະຈຸບັນ, ຜົນໄດ້ຮັບທີ່ສະເໜີນັ້ນ ແມ່ນເປັນກໍລະນີທີ່ແນ່ນອນ. ພະນັກງານສັດຕະວະແພດບ້ານ ເຄື່ອນໄຫວລົງສີດຢາວັກຊີນໃຫ້ສັດລ້ຽງ ໃນມື້ນຶ່ງ ໄດ້ປະມານ 20 ຫາ 30 ໂຕ. ແຕ່ຢູ່ໃນຕົວເລກ ຂອງໂຄງການສະໜອງການບໍລິການສັດຕະວະແພດເຊີງພານິດ ແມ່ນມື້ນຶ່ງໃຫ້ໄດ້ປະມານ 40 ຫາ 200 ໂຕ.

ໃນຕາຕະລາງ 1, ສະແດງໃຫ້ເຫັນຕົວເລກການສັກຢາວັກຊີນ ຢູ່ເມືອງຄູນ ແລະ ເມືອງໜອງແຮດ ໃນຊຸມປີ 2004–2009. ແຜນງານພັດທະນາການລ້ຽງສັດນີ້ ແມ່ນໄດ້ຮັບທຶນບໍລິຈາກ ໂດຍຄະນະກໍາມາທິການຍູໂຣບ ເຂົ້າໃນການບໍລິການສັກຢາວັກຊີນແບບບໍ່ເສັຍຄ່າ ຢູ່ໃນເມືອງເຫຼົ່ານັ້ນ ຜ່ານເຄືອຂ່າຍພະນັກງານສັດຕະວະແພດບ້ານ. ເມື່ອຄະນະກໍາມາທິການໂຍໂຣບ ຄ່ອຍໆເລີ້ມຢຸດການສະໜັບສະໜູນ ໂຄງການໃນປີ 2008 ແລະ ຢຸດການບໍລິການສັກຢາວັກຊີນ ແບບບໍ່ເສຍຄ່າ, ຕົວເລກການສັກຢາວັກຊີນ ແມ່ນຫຼຸດລົງທີ່ສຸດ ແລະ ຫຼຸດລົງຕໍ່າກວ່າຕົວເລກການສັກຢາວັກຊີນ ກ່ອນໜ້າໂຄງການເລີ້ມຕົ້ນດ້ວຍຊໍ້າ. ດ້ວຍເຫດນີ້ຈຶ່ງເຮັດໃຫ້ອັດຕາການຕາຍຂອງສັດລ້ຽງ ເພີ້ມຂຶ້ນ.

ໂດຍປຽບທຽບ, ຕົວເລກການສັກຢາວັກຊີນ ຢູ່ເມືອງແປກ ໃນໄລຍະເວລາອັນດຽວກັນ ສະແດງໃຫ້ເຫັນວ່າ ຈໍານວນງົວ ແລະ ຄວາຍທີ່ສັກຢາວັກຊີນເພີ້ມຂຶ້ນ ນັບຕັ້ງແຕ່ໂຄງການສະໜອງ ການບໍລິການສັດຕະວະແພດເຊີງພານິດ ເລີ້ມຕົ້ນໃນປີ 2006 (ເບິ່ງຕາຕະລາງ 2). ເຖິງແມ່ນວ່າຈໍານວນຕົວເລກການສັກຢາວັກຊີນ ຈະເພີ້ມຂຶ້ນຢ່າງຊ້າໆ ເພື່ອສ້າງຄວາມເຂັ້ມແຂງ ໃນຊ່ວງໄລຍະທໍາອິດ ຂອງໂຄງການສະໜອງການບໍລິການສັດຕະວະແພດເຊີງພານິດ ສະແດງຜົນວ່າ ມີຄວາມຍືນຍົງເພີ້ມຂຶ້ນ ແລະ ອັດຕາການສັກຢາວັກຊີນໂດຍລວມ ສູງກວ່າການບໍລິການບໍ່ເສຍຄ່າ.

**ຕາຕະລາງ 1: ສະພາບການສັກຢາວັກແຊງ ຢູ່ເມືອງຄູນ ແລະ ເມືອງໜອງແຮດ, 2004-2009**

| ປີ | ເມືອງ | ຄວາຍ | | | ງົວ | | |
|---|---|---|---|---|---|---|---|
| | | ລວມ | ອັດຕາການຕາຍ | ການສັກຢາວັກແຊງ | ລວມ | ອັດຕາການຕາຍ | ການສັກຢາວັກແຊງ |
| 2004 | ຄູນ | 8123 | 286 | 1873 | 9146 | 148 | 2368 |
| 2005 | | 10963 | 526 | 3096 | 12211 | 251 | 2352 |
| 2006 | | 7883 | 98 | 2397 | 12738 | 186 | 4401 |
| 2007 | | 7842 | 46 | **3643** | 12668 | 38 | **4124** |
| 2008 | | 8319 | 41 | **139** | 13715 | 5 | **27** |
| 2009 | | 8602 | 151 | 471 | 13224 | 312 | 267 |
| | | | | | | | |
| 2004 | ໜອງແຮດ | 3474 | 129 | 611 | 14695 | 427 | 1538 |
| 2005 | | 3614 | 61 | 886 | 14777 | 220 | 1431 |
| 2006 | | 3872 | 56 | 94 | 14913 | 118 | 1206 |
| 2007 | | 5592 | 29 | **947** | 15198 | 58 | **4994** |
| 2008 | | 3062 | 8 | **318** | 16713 | 12 | **1899** |
| 2009 | | 2729 | 98 | 457 | 16384 | 98 | 7122 |

**ຕາຕະລາງ 2: ສະພາບການຊັກຢາວັກແຊງ ຢູ່ເມືອງແປກ, 2004-2009**

| ປີ | ເມືອງ | Buffaloes | | | Cattle | | |
|---|---|---|---|---|---|---|---|
| | | ລວມ | ອັດຕາການຕາຍ | ການສັກຢາວັກແຊງ | ລວມ | ອັດຕາການຕາຍ | ການສັກຢາວັກແຊງ |
| 2004 | ແປກ | 11250 | 61 | 5725 | 27400 | 192 | 12700 |
| 2005 | | 11860 | 35 | 5489 | 29362 | 30 | 4621 |
| 2006 | | 12195 | 186 | 4528 | 29326 | 350 | 15011 |
| 2007 | | 12638 | 79 | 5998 | 30269 | 168 | 13525 |
| 2008 | | 12865 | 58 | 6522 | 31026 | 120 | 14337 |
| 2009 | | 13037 | 163 | 7274 | 33009 | 187 | 17434 |

**(ຂໍ້ມູນຈາກພະແນກກະສິກຳ ແລະ ປ່າໄມ້ ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ).**

## ພາບລວມຂອງຮູບແບບການສະໜອງບໍລິການສຸຂະພາບສັດເຊີງທຸລະກິດ

ຂະບວນການສ້າງຕັ້ງລະບົບການສະໜອງບໍລິການສຸຂະພາບສັດເຊີງທຸລະກິດ ແມ່ນດຳເນີນຕາມໂຄງຮ່າງ ທີ່ສະເໜີຢູ່ໃນຕາຕະລາງ 3 ຂ້າງລຸ່ມ, ຊຶ່ງມີຄວາມສຳຄັນ ຄ້າຍຄືການກຳນົດພາລະບົດບາດໃຫ້ແກ່ຜູ້ສະໜອງການບໍລິການເອງ.

**ຕາຕະລາງ 3 ຂັ້ນຕອນ ສຳລັບການກຳນົດ ແລະ ການສະໜັບສະໜູນ.**

| ຂັ້ນຕອນ | ການປະຕິບັດງານ |
|---|---|
| 1 | *ການປະເມີນປະເດັນກ່ຽວກັບສຸຂະພາບສັດແບບມີສ່ວນຮ່ວມ*<br>• ເພື່ອສ້າງຈິດສຳນຶກໃຫ້ແກ່ຊາວກະສິກອນ ເຖິງຄວາມຈຳເປັນ ສຳລັບການບໍລິການສຸຂະພາບສັດ<br>• ເພື່ອແຈ້ງໃຫ້ພະນັກງານສົ່ງເສີມຮູ້ຈັກກ່ຽວກັບປະເດັນຕ່າງໆທີ່ສຳຄັນ ຕໍ່ກັບສຸຂະພາບສັດ ເພື່ອຈະໄດ້ເອົາໃຈໃສ່ແກ້ໄຂຢ່າງທັນການ |
| 2 | *ການໂຄສະນະສົ່ງເສີມ ວິທີການບໍລິການ ເໝືອນດັ່ງ ເປັນອົງກອນໃໝ່ນຶ່ງ*<br>• ເພື່ອໃຫ້ການສະໜອງການບໍລິການສັດຕະວະແພດ ເຊີງພານິດ ທີ່ເປັນທ່າແຮງ ໃຫ້ຄຳນຶ່ງເຖິງກາລະໂອກາດ ແລະ ເປັນການເຊີນຊວນ<br>• ເພື່ອແຈ້ງໃຫ້ຊາວບ້ານທັງໝົດ (ຜູ້ທີ່ມີທ່າແຮງ) ວ່າການບໍລິການແມ່ນກຽມພ້ອມແລ້ວ |
| 3 | *ການສ້າງຕັ້ງການສະໜອງການບໍລິການສັດຕະວິແພດເຊີງພານິດ*<br>• ຜູ້ທີ່ມີຄວາມສົນໃຈ ຈະຕ້ອງໄດ້ຮັບການສະໜັບສະໜູນ ແລະ ອະນຸມັດ ຈາກສະມາຄົມການຄ້າໃນທ້ອງຖິ່ນຂອງເຂົາເຈົ້າ ກ່ອນຈະເຂົ້າຮ່ວມໂຄງການ.<br>• ຊາວກະສິກອນ ຜູ້ທີ່ຖືກຄັດເລືອກເຂົ້າຮ່ວມການຝຶກອົບຮົມ ຕ້ອງໄດ້ເສຍຄ່າທຳນຽມ.<br>• ການຝຶກອົບຮົມທີ່ເໝາະກັບຄວາມຕ້ອງການຂອງທ້ອງຖິ່ນ. |
| 4 | *ການອູ້ມຊູ*<br>• ການອູ້ມຊູ ແມ່ນມີຄວາມຈຳເປັນ ສຳລັບການສະໜັບສະໜູນ ການສະໜອງການບໍລິການດ້ານສັດຕະວະແພດ ເຊີງພານິດ ໂດຍສະເພາະ ໃນເລື້ອງ ວິຊາການສຸຂະພາບສັດ ແລະ ການຄຸ້ມຄອງການບໍລິການ |

ຕາມລະບຽບການແລ້ວ, ກ່ອນທີ່ຈະໄດ້ຮັບໃບຢັ້ງຢືນ ການສະໜອງການບໍລິການສັດຕະວະແພດເຊີງພານິດ ແມ່ນຕ້ອງເປັນຜູ້ທີ່ຫ້າວຫັນນຳໃຊ້ວິທີການດັ່ງກ່າວ 12 ເດືອນ ກ່ອນ ພາຍຫຼັງການຝຶກອົບຮົມເສັດສິ້ນ. ຕົວວັດແທກທັງສອງຢ່າງນີ້ ແມ່ນເປັນແຮງຈູງໃຈ ສຳລັບການສະໜອງການບໍລິການສັດຕະວະແພດເຊີງພານິດ ໃຫ້ມີຄວາມມຸ້ງໝັ້ນ ແລະ ຍືນຍົງຍາວນານໄດ້.

ການສະໜອງການບໍລິການສັດຕະວະແພດເຊີງພານິດ ແມ່ນມີຄວາມຮັບຜິດຊອບທີ່ຈະຊຸກຍູ້ສົ່ງເສີມການບໍລິການຂອງຕົນ ດ້ວຍຕົນເອງ. ຄວາມເຊື່ອໝັ້ນຂອງຜູ້ໃຊ້ບໍລິການ ແມ່ນເປັນການຮັບປະກັນວ່າ ບ່ອນ ທີ່ມີການສະໜອງການບໍລິການສັດຕະວິແພດເຊີງພານິດ ໄດ້ມີການຮ່ວມມືກັບອຳນາດການປົກຄອງບ້ານ, ມີການເຂົ້າຮ່ວມກອງປະຊຸມບ້ານ ແລະ ມີການອະທິບາຍເຖິງພະຍາດຂອງສັດລ້ຽງ ແກ່ຊາວກະສິກອນ, ຈຶ່ງຈະສົ່ງເສີມໃຫ້ມີການສັກຢາວັກຊີນໄດ້. ຖ້າຫາກວ່າ ການບໍລິການທີ່ສະໜອງໄປນັ້ນ ມີຄຸນນະພາບດີ, ການບອກເລົ່າປາກຕໍ່ປາກກໍ່ຈະເປັນການໂຄສະນາທາງນຶ່ງແນ່ນອນ. ໃນປະຈຸບັນ, ຊາວກະສິກອນລາຍຍ່ອຍ ຜູ້ທີ່ໃຊ້ບໍລິການການສະໜອງການບໍລິການສັດຕະວະແພດເຊີງພານິດ ໄປກ່ອນນັ້ນ ແມ່ນເປັນຜູ້ທີ່ອູ້ມຊູ ທີ່ເປັນຜົນບວກທີ່ສຸດ. ໂດຍ

ສະເພາະ, ພວກເຂົາໄດ້ສະແດງຄວາມເພິ່ງພໍໃຈກັບການບໍລິການ ທີ່ມີຄຸນນະພາບ ແລະ ຕໍ່ກັບລາຄາ, ຈຳນວນສັດສັກຢາວັກຊິນ ເພີ້ມຂຶ້ນ ແລະ ຕາມການສັງເກດ ຈຳນວນສັດຕາຍ ແລະ ສັດທີ່ມີຄວາມຜິດປົກກະຕິຫຼຸດລົງ.

ແຜນການສະໜອງການບໍລິການສັດຕະວະແພດເຊີງພານິດ ແລະ ການດຳເນີນວຽກງານທັງໝົດ ແມ່ນເປັນໄປຢ່າງມີລະບົບ ແລະ ມີການພົວພັນກັບອຳນາດການປົກຄອງບ້ານ ເພື່ອກຳນົດວ່າ ມີຈັກຄອບຄົວຕ້ອງການທີ່ຈະສັກຢາວັກຊິນ. ຊາວກະສິກອນລາຍຍ່ອຍ ຈະຖືກຖາມໃຫ້ລວບລວມນຳເອົາສັດໄປຍັງສະຖານທີ່ ໃນການບໍລິການຢ່າງມີປະສິດທິຜົນ. ໂຄງການສະໜອງການບໍລິການສັດຕະວະແພດເຊີງພານິດ ຈະເປັນຜູ້ຊື້ຢາວັກຊິນ ແລະ ຊາວກະສິກອນລາຍຍ່ອຍ ຜູ້ທີ່ບໍ່ໄດ້ຮັບການຕົກລົງມາກ່ອນ ຫຼື ບໍ່ໄດ້ນັດໝາຍມາກ່ອນ ຕ້ອງໄດ້ຈ່າຍຄ່າຍາວັກຊິນ. ເມື່ອຢາວັກຊິນໄດ້ຖືກນຳໃຊ້, ຈະໄດ້ບັນທຶກ ວັນເດືອນປີ ຂອງການສັກ ແລະ ອອກໃບຢັ້ງຢືນໃຫ້.

ນອດຈາກນັ້ນ, ເພື່ອສະໜອງການບໍລິການສຸຂະພາບສັດ, ໂຄງການສະໜອງການບໍລິການ ສັດຕະວະແພດເຊີງພານິດ ແມ່ນມີຄວາມສາມາດ ທີ່ຈະໃຫ້ການບໍລິການດ້ານວິຊາການ ແລະ ຂໍ້ມູນຂ່າວສານການຕະຫຼາດ ແກ່ຊາວກະສິກອນລາຍຍ່ອຍ ຊຶ່ງໃນນັ້ນແມ່ນ ລວມທັງການສ້າງຄອກສັດ, ການປູກຫຍ້າອາຫານສັດ ແລະ ຜະລິດອາຫານເສີມ.

## ຄຳແນະນຳ:

ໂຄງການສະໜອງການບໍລິການສັດຕະວະແພດເຊີງພານິດ ໄດ້ພິສູດແລ້ວວ່າ ວິທີການນຳເອົາການບໍລິການສຸຂະພາບສັດ ແລະ ຖ້ານຳໄປຂະຫຍາຍ ແລະ ນຳໃຊ້ຢູ່ໃນລະດັບຊາດ ແມ່ນມີສັກກາຍະພາບທີ່ສຸດທີ່ຈະເພີ້ມການຜະລິດທາງກະສິກຳ ແລະ ການຕະຫຼາດ ຢ່າງມີປະສິດທິຜົນ ໃນ ສປປ ລາວ.

ຜົນສຳເລັດຂອງລະບົບການສະໜອງການລິການສັດຕະວິແພດເຊີງພານິດ ສາມາດປະກອບສ່ວນມີລັກສະນະ ແລະ ອອກແບບຈຳເພາະ ຄື:

- ການເລືອກໂຄງການສະໜອງການບໍລິການສັດຕະວິແພດເຊີງພານິດ ບົນພື້ນຖານຄວາມຮູ້ຄວາມສາມາດ ແລະ ບົນພື້ນຖານການສະໜັບສະໜູນ ຂອງຊຸມຊົນຂອງເຂົາເຈົ້າ.
- ຕ້ອງການການປະກອບສ່ວນຂອງຜູ້ເຂົ້າຮ່ວມສຳລັບ ການຝຶກອົບຮົມ ແມ່ນມີຜົນກະທົບທາງບວກໃນການຄັດເລືອກ.
- ການເລີ້ມຕົ້ນ ແລະ ການຂະຫຍາຍລະບົບ ໂດຍອີງໃສ່ຄວາມຕ້ອງການຂອງຕະຫຼາດ.
- ຕາມຂະບວນການຂອງອຳນາດການປົກຄອງທ້ອງຖິ່ນ ແລະ ຕາມການບໍລິການສາທາລະນະຊົນ.
- ສືບຕໍ່ສະໜັບສະໜູນດ້ານວິຊາການ, ສ້າງເຄື່ອຂ່າຍ ແລະ ຮຽນຮູ້ຮ່ວມກັນ.

## ສະຫຼຸບ ແລະ ບົດຮຽນທີ່ຖອດຖອນໄດ້

ການສະໜອງການບໍລິການສັດຕະວະແພດເຊີງພານິດ ເໝືອນດັ່ງກົນໄກການບໍລິການສຸຂະພາບທີ່ແຂງແກ່ນ ແມ່ນເປັນການ ແຈ້ງເຖິງບົດຮຽນ ແລະ ປະສົບການ ໂດຍໂຄງການການສະໜອງການບໍລິການສັດຕະວະແພດເຊີງພານິດ, ຜູ້ຜະລິດ ແລະ ພໍ່ຄ້າ. ເຖິງຢ່າງໃດກໍ່ຕາມ, ຄວາມສົນໃຈທັງໝົດ ກໍ່ຕ້ອງໄດ້ມີການຈົດແຕ້ມຂໍ້ຈຳກັດຕ່າງໆ ເພື່ອການປັບປຸງແກ້ໄຂໃນຂັ້ນຕໍ່ໄປ.

ທຳອິດ, ໄດ້ມີການບັນທຶກໄວ້ວ່າ ມີບາງໂຄງການການສະໜອງການບໍລິການສັດຕະວະແພດ ໄດ້ສະໜອງການບໍລິການ ສະເພາະແຕ່ຢູ່ໃນບ້ານຂອງພວກເຂົາເອງ ຫຼາຍກວ່າການໄປເຮັດຢູ່ບ້ານອື່ນ. ອັນທີສອງ, ການເກັບຮັກສາ, ການຄຸ້ມຄອງກວດກາອຸນຫະພູມ ແລະ ການຂົນສົ່ງຢາວັກຊິນແມ່ນບໍ່ເຮັດໄດ້ສະເໝີໄປ. ສຸດທ້າຍ, ການສະໜອງການບໍລິການສັດຕະວະແພດ ບາງຄັ້ງຄາວ ມີຄວາມຫຍຸ້ງຍາກ ທີ່ຈະກະຕຸກຊຸກຍູ້ຊາວກະສິກອນ ວ່າການຊັກຢາວັກຊິນ ມີຄວາມຈຳເປັນຂະໜາດໃດ ແລະ ພວກເຂົາຄວນຈະຕ້ອງໄດ້ຈ່າຍໃຫ້ແກ່ການບໍລິການ. ແຜນງານການສະໜອງການບໍລິການແບບບໍ່ໄດ້ເສັຍຄ່າ ແມ່ນໄປກະທົບເຖິງຄວາມຍືນຍົງ ແລະ ຄວາມມີປະສິດທິຜົນ ຂອງການສະໜອງການບໍລິການສັດຕະວະແພດເຊີງພານິດ.

ເຖິງແມ່ນວ່າ ໃນປະຈຸບັນ, ໂຄງການສະໜອງການບໍລິການສັດຕະວະແພດໄດ້ຮັບຄຳປຶກສາ ດ້ານວິຊາການ ຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (ຫ້ອງການຂະແໜງລ້ຽງສັດ), ຈຶ່ງຂໍແນະນຳວ່າ ຄວນມີການຝຶກອົບຮົມດ້ານວິຊາການໃຫ້ຫຼາຍຂຶ້ນ ຈຶ່ງຈະໄດ້ໃນການພົວພັນ ເພື່ອການບໍລິຫານວັກຊິນ ແລະ ການຮັກສາ, ລວມທັງການສະໜອງການບໍລິການສົ່ງເສີມ (ການນຳໃຊ້ຫຍ້າອາຫານສັດ, ການລ້ຽງສັດ, ເຕັກນິກການໃຫ້ອາຫານສັດ, ການປັບປຸງພັນ).

ການນຳເອົາສິ່ງທີ່ມີສັກກະຍະພາບ (ທ່າແຮງ) ສຳລັບການຂະຫຍາຍການລ້ຽງສັດຂອງ ຊາວກະສິກອນລາຍຍ່ອຍເຊີງພານິດ ແລະ ການຕະຫຼາດ ໂດຍຜ່ານການນຳສະເໜີຂອງໂຄງການສະໜອງການບໍລິການສັດຕະວະແພດເຊີງພານິດ ແມ່ນເປັນພຽງແຕ່ຜົນສຳເລັດ ຢູ່ພາຍໃຕ້ເງື່ອນໄຂທີ່ແນ່ນອນເທົ່ານັ້ນ:

- *ມີຄວາມສົນໃຈຢ່າງຫຼວງຫຼາຍ ຢູ່ໃນກຸ່ມຊາວກະສິກອນລາຍຍ່ອຍທີ່ຢາກຈະນຳໃຊ້ການບໍລິການສຸຂະພາບສັດ.* ພົບເຫັນຫຼາຍທີ່ສຸດແມ່ນຢູ່ໃນບ່ອນທີ່ຊາວກະສິກອນ ທີ່ມີການຄຸ້ມຄອງ ແລະ ລ້ຽງສັດສຳລັບຂາຍປົກກະຕິ ແລະ ມີຄວາມສົນໃຈ ໃນການປົກປ້ອງລາຍຮັບຂອງເຂົາເຈົ້າ.
- *ມັນມີວຽກທີ່ຈະຕ້ອງໄດ້ເຮັດຢ່າງຫຼວງຫຼາຍຢູ່ໃນໂຄງການສະໜອງການບໍລິການສັດຕະວະແພດເຊີງພານິດ, ເພື່ອຮັບປະກັນແຮງຈູງໃຈ ສຳລັບການສະໜອງການບໍລິການ.* ຫຼັກສູດການຝຶກອົບຮົມ ການສະໜອງການບໍລິການສັດຕະວະແພດເຊີງພານິດ ຄວນຈັດໃຫ້ທັງທັກສະ ແລະ ຄວາມຮູ້ທີ່ຈຳເປັນ ເພື່ອໃຫ້ເຮັດວຽກໄດ້ຕະຫຼອດປີ ແລະ ໄດ້ຕາມຈຳນວນໝູ່ບ້ານ.
- *ການໃຫ້ບໍລິການ ແມ່ນຕ້ອງປັບໃຫ້ເໝາະສົມ ກັບຄວາມຕ້ອງການຂອງຜູ້ລ້ຽງສັດລາຍຍ່ອຍ.* ຫຼັກສູດ ຕ້ອງຕົງກັບປະເດັນ ເລື້ອງສຸຂະພາບສັດ ຊຶ່ງຜູ້ລ້ຽງສັດໄດ້ສະເໜີ ໃນເວລາປະເມີນຄວາມຕ້ອງການ.
- *ຣາຄາ, ຕ້ອງເປັນຣາຄາທີ່ເປີດກວ້າງສາມາດຕໍ່ລອງໄດ້ວ່າມັນເປັນຫຍັງຈຶ່ງມີຄວາມຈຳເປັນ ຕ້ອງໄດ້ກຳນົດຣາຄາສຳລັບຢາວັກຊິນ.* ຄ່າທຳນຽມການປິ່ນປົວຕໍ່ລອງໄດ້ ລະຫວ່າງຜູ້ຜະລິດລາຍຍ່ອຍ ແລະ ຜູ້ໃຫ້ການສະໜອງບໍລິການສັດຕະວະແພດເຊີງພານິດ ແລະ ບໍ່ແມ່ນການບັງຄັບ.
- *ມີການເຊັນສັນຍາຮ່ວມກັນກັບບຸກຄົນທີ່ເຂົ້າຮ່ວມການຝຶກອົບຮົມ.* ນີ້ເພື່ອຮັບປະກັນ ຄວາມເຂົ້າໃຈ ແລະ ຄວາມຜູກພັນ ຂອງທັງສອງຝ່າຍ. ສັນຍານັ້ນ ຄວນຈະລວມເຖິງການຈ່າຍຄ່າທຳນຽມສຳລັບການສະໜອງການຝຶກອົບຮົມ, ຖ້າການຝຶກອົບຮົມບໍ່ໄດ້ຈັດຢູ່ໃນໄລຍະ 30 ວັນ.
- *ຕ້ອງໄດ້ຈັດກອງປະຊຸມແລກປ່ຽນ ຫຼື ຕິດຕາມກວດກາ.* ຊຶ່ງມັນເປັນການຊີ້ວັດ ເຖິງຄວາມຄືບໜ້າ ຂອງປະເດັນການປະສານງານ ແລະ ວິຊາການ ແລະ ຍັງເປັນການສະໜອງຄຳແນະນຳ ສຳລັບການປັບປຸງ.



ເຮັດວຽກເພື່ອຜົນກຳໄລ ສະໜອງແຮງຈູງໃຈ ສຳລັບການບໍລິການ
ເພື່ອສືບຕໍ່ອາຍຸໂຄງການ

## ຜົນສະຫຼຸບຂອງການຄົ້ນຄວ້າທີ່ມີໃນປະຈຸບັນ

| ນຳເບີ | ຫົວຂໍ້ | ເດືອນ/ປີ ຂຽນ | ຜູ້ສະໜັບສະໜູນ |
|---|---|---|---|
| 01 | ນອກເໜືອຈາກການຜະລິດ: ເອື້ອອຳນວຍຕໍ່ການເຂົ້າເຖິງຕະຫຼາດ ຜ່ານກຸ່ມຊາວກະສິກອນ | ທັນວາ 2009 | URDP |
| 02 | ຕະຫຼາດ ແມ່ນປັດໄຈສຳຄັນ ໃຫ້ແກ່ການຜະລິດກະສິກຳ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ ຊາວກະສິກອນ | ພຶດສະພາ 2010 | URDP |
| 03 | ການປັບປຸງການລ້ຽງສັດເພື່ອຫຼຸດຜ່ອນຄວາມທຸກຍາກ | ພຶດສະພາ 2010 | URDP |
| 04 | “ຄວາມພົ້ນເດັ່ນຂອງການປູກສາລີ” ໃນເຂດລຸ່ມເມືອງຄຳ ແລະ ເມືອງໜອງແຮດ | ມີນາ 2011 | IRD/CIFOR |
| 05 | ການປັບປຸງຄຸນນະພາບຂອງດິນ ເພື່ອປົກປັກຮັກສາຊັບພະຍາກອນທຳມະຊາດໃນເຂດພູສູງ ທາງ ພາກເໜືອ ຂອງເມືອງຄຳ ແຂວງຊຽງຂວາງ | ມີນາ 2011 | IRD/CIFOR |
| 06 | ການປັບປຸງທົ່ງຫຍ້າລ້ຽງສັດ ໂດຍການນຳໃຊ້ເຕັກນິກ ລະບົບການປູກພືດໂດຍກົງ (DMC) ເຂົ້າໃນການ ປູກເຂົ້າໄຮ່: 2 ທາງເລືອກ ໃນການນຳໃຊ້ທີ່ດິນແບບກະເສດສຸມ ຢູ່ເຂດເມືອງແປກ | ມີນາ 2011 | IRD/CIFOR |
| 07 | ການເປີດກວ້າງການຄ້າ: ການສຶກສາປຽບທຽບ | ກັນຍາ 2010 | SADU |
| 08 | ການຮັບປະກັນການຜະລິດ ແລະ ການຕົກລົງຊື້ຂາຍ ດ້ວຍການສ້າງສັນຍາຜະລິດກະສິກຳ | ຕຸລາ 2010 | SADU |
| 09 | ການເອື້ອອຳນວຍໃຫ້ແກ່ຂະບວນການຊຸມງົວເພື່ອການຄ້າ ຢູ່ໃນເຂດພູດອຍ ສປປ ລາວ | ຕຸລາ 2010 | SADU |
| 10 | ການສະໜອງການບໍລິການສັດຕະວະແພດ ເຊີງພານິດ: ເປັນທາງອອກທີ່ດີ ແລະ ຍັ້ງຍືນນຶ່ງ ສຳລັບ ການສະໜອງບໍລິການສຸຂະພາບສັດ | ກັນຍາ 2010 | SADU |

## ຂໍ້ມູນກ່ຽວກັບ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ (ສຄກປ)

ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ (ສຄກປ) ໄດ້ສ້າງຕັ້ງຂຶ້ນໃນປີ 1999, ເພື່ອຈຸດປະສົງເຕົ້າໂຮມເອົາ ບັນດາກິດຈະກຳ ການຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ໃນທົ່ວປະເທດ ແລະ ເພື່ອພັດທະນາລະບົບປະສານງານການຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງ ຊາດ ໃຫ້ດີຂຶ້ນ. ສຄກປ ມີຄວາມຕັ້ງໃຈທີ່ຈະປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນເປົ້າໝາຍຂອງລັດຖະບານ ໂດຍຈະເນັ້ນໃສ່ການຄົ້ນຄວ້າ ແບບນຳໃຊ້ ເພື່ອເອົາຊະນະບັນຫາຕ່າງໆ ໂດຍສະເພາະ ບັນຫາທີ່ກ່ຽວພັນກັບການຜະລິດ ກະສິກຳ ແລະ ປ່າໄມ້. ສຄກປ ມີຄວາມສະດຸ້ງ ໄວຕໍ່ກັບການຫັນເອົາຜົນຂອງການຄົ້ນຄວ້າ ໄປໂຄສະນາເຜີຍແຜ່ອອກສູ່ວົງກວ້າງ ເພື່ອເຮັດໃຫ້ແຜນງານລົບລ້າງຄວາມທຸກຍາກ ແລະ ການພັດທະນາຊັບພະຍາກອນທຳມະຊາດແບບຍືນຍົງ ຂອງລັດຖະບານ ມີປະສິດທິຜົນຍິ່ງຂຶ້ນ. ສຄກປ ແມ່ນອົງການຈັດຕັ້ງວິຊາການ ນຶ່ງ ສັງກັດໃນກົງຈັກການຈັດຕັ້ງ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ມີຖານະທຽບເທົ່າກົມ, ໂດຍໄດ້ເຕົ້າໂຮມເອົາບັນດາສູນຄົ້ນຄວ້າວິ ຊາການຕ່າງໆ ທີ່ຂຶ້ນກັບກົມວິຊາການ ອ້ອມຂ້າງກະຊວງ ໃນເມື່ອກ່ອນ.

ຂໍ້ມູນເພີ່ມເຕີມ ກະລຸນາເຂົ້າເບິ່ງ Website ຂອງ ສຄກປ: www.nafri.org.la

## ຂໍ້ມູນກ່ຽວກັບຜົນສະຫຼຸບຂອງການຄົ້ນຄວ້າ ຂອງ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ

ຜົນສະຫຼຸບຂອງການຄົ້ນຄວ້າ ຂອງ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ຈັດພິມຂຶ້ນເພື່ອຈຸດປະສົງເຜີຍແຜ່ ແລະ ແຈກຢາຍໂດຍກົງ ໃຫ້ແກ່ພະນັກງານການນຳຕ່າງໆ (ກະຊວງ, ແຂວງ ແລະ ເມືອງ), ລວມໄປເຖິງອົງການຈັດຕັ້ງສາກົນ ແລະ ຜູ້ ໃຫ້ທຶນ. ຊຶ່ງຜົນສະຫຼຸບຈາກການຄົ້ນຄວ້າດັ່ງກ່າວ ສ້າງຂຶ້ນໂດຍການສັງລວມ ບົດຮຽນ, ປະສົບການ ແລະ ການຄົ້ນຄວ້າ ຂອງ ສະ ຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ໃນໄລຍະຜ່ານມາຜ່ານມາ. ເປັນບົດສະຫຼຸບທີ່ວິໄຈຂໍ້ມູນຂ່າວສານໂດຍສັງເຂບກ່ຽວ ກັບດ້ານກະສິກຳ ແລະ ດ້ານການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ກຳລັງພົ້ນເດັ່ນ ຢູ່ ສປປ ລາວ ໃນປະຈຸບັນ. ພ້ອມດຽວກັນນັ້ນ ຍັງໄດ້ສະໜອງກອບແນວຄິດແກ່ຜູ້ອ່ານ ໂດຍສະເພາະ ວິທີທາງເລືອກ ຫຼື ວິທີແກ້ໄຂບັນຫາທີ່ເປັນຮູບປະທຳກ່ຽວກັບປະເດັນທີ່ໄດ້ຍົກຂຶ້ນມາຂຽນນັ້ນຕື່ມອີກ. ກອບແນວຄວາມຄິດທີ່ຢາກລິເລີ້ມຜະລິດ ຜົນສະຫຼຸບຈາກການຄົ້ນຄວ້ານີ້ຂຶ້ນມານັ້ນ, ອັນນຶ່ງ ກໍ່ແມ່ນຍ້ອນຄຳຄິດ ເຫັນຂອງການນຳໃນຂັ້ນຕ່າງໆ ທີ່ມີຄວາມຕ້ອງການທາງດ້ານຂໍ້ມູນຂ່າວສານ, ອັນທີສອງ ແມ່ນອີງໃສ່ຜົນສຳເລັດ ຂອງ ການຄົ້ນຄວ້າ ຂອງ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ.

**ສອບຖາມຂໍ້ມູນເພີ້ມເຕີມ ຕິດຕໍ່:**

ທ່ານ ຣສ ດຣ. ລິນຄຳ ດວງສະຫວັນ
ຫົວໜ້າ ສູນຄົ້ນຄວ້າ ນະໂຍບາຍ ກະສິກຳ ແລະ ປ່າໄມ້
ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ຕປນ 7170, ນະຄອນຫຼວງວຽງຈັນ, ສປປ ລາວ
Email: Linkham.d@nafri.org.la

ທ່ານ ບັນດິດ ຣາມາງກູນ
ຮອງຫົວໜ້າ ສູນຂໍ້ມູນຂ່າວສານ ການຄົ້ນຄວ້າ ກະສິກຳ ແລະ ປ່າໄມ້
ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ຕປນ 7170, ນະຄອນຫຼວງວຽງຈັນ, ສປປ ລາວ
Email: bandith@nafri.org.la

**ອົງການຈັດຕັ້ງສາກົນ ທີ່ເຮັດວຽກຮ່ວມກັບ ສຄກປ**

CIAT 45 — Centro Internacional de Agricultura Tropical / International Center for Tropical Agriculture / A Remarkable Record of Science for Change / Since 1967
CIFOR
cirad
IRD — Institut de recherche pour le développement
LAO - IRRI
IWMI — International Water Management Institute